ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----๛๛✧✧✧๛๛-----

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ: 0051 /ກປ.

ນະຄອນຫຼວງ ວຽງຈັນ, ວັນທີ .....20 APR 2009

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍ ການຟື້ນຟູປ່າໄມ້

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007.
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 148/ນຍ, ລົງວັນທີ 10 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ກະຊວງກະສິກຳ ແລະ ປ່າໄມ້.

ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ I

## ບົດບັນຍັດທົ່ວໄປ

ມາດຕາ 1. ຫຼັກການລວມ

ຂໍ້ຕົກລົງ ສະບັບນີ້ ໄດ້ກຳນົດຈຸດປະສົງ, ລະດັບຄາດໝາຍ ແລະ ຫລັກການລວມ ກ່ຽວກັບ ການປົກປັກຮັກສາ, ການພັດທະນາ ແລະ ຟື້ນຟູບູລະນະປ່າໄມ້ຊຸດໂຊມ ແລະ ທີ່ດິນປ່າປອກໂຫລ້ນ ໃນຂອບເຂດ ທົ່ວປະເທດ, ເພື່ອເຮັດໃຫ້ປ່າໄມ້ ທີ່ໄດ້ຖືກທຳລາຍໃນໄລຍະຜ່ານມາ ກັບກາຍມາເປັນປ່າໄມ້ທຳມະຊາດ ທີ່ອຸດົມສົມບູນຄືນໃໝ່. ສາມາດຮັບໃຊ້ໃຫ້ແກ່ການພັດທະນາເສດຖະກິດ - ສັງຄົມແຫ່ງຊາດຢ່າງຍືນນານ ທັງເປັນການປົກປັກຮັກສາສິ່ງແວດລ້ອມທຳມະຊາດ.

ມາດຕາ 2. ຈຸດປະສົງ

1. ເພື່ອເຮັດໃຫ້ ຊັບພະຍາກອນປ່າໄມ້ ທີ່ມີໃນປະຈຸບັນ ໄດ້ຮັບການຄຸ້ມຄອງ ປົກປັກຮັກສາ, ຟື້ນຟູ ແລະ ປູກປ່າ ດ້ວຍການຟື້ນຟູບູລະນະ ເຂດປ່າໄມ້ເຊື່ອມໂຊມ ແລະ ທີ່ດິນປ່າປອກໂຫລ້ນ ໃຫ້ອຸດົມສົມບູນຮັ່ງມີຂຶ້ນ ແລະ ນຳໃຊ້ ຢ່າງຍືນນານ .
2. ເພື່ອເຮັດໃຫ້ການຟື້ນຟູປ່າໄມ້ທຳມະຊາດ ທີ່ຖືກທຳລາຍ ດ້ວຍການຖາງປ່າເຮັດໄຮ່, ໄຟໄໝ້ລາມປ່າ ແລະ ການຂຸດຄົ້ນໄມ້ຢ່າງຕໍ່ເນື່ອງ ໃນໄລຍະຜ່ານມາໃຫ້ກັບກາຍເປັນປ່າດົງຄືນໃໝ່ ທີ່ປະກອບ ດ້ວຍຊະນິດພັນໄມ້ ທີ່ມີຄຸນຄ່າດ້ານເສດຖະກິດ, ປ່າຍອດນ້ຳ, ປ່າແຫລ່ງນ້ຳ, ດິນ, ຖິ່ນທີ່ຢູ່ອາໄສ ຂອງສັດປ່າ, ຮັກສາສິ່ງແວດລ້ອມ, ປ້ອງກັນການເຊາະເຈື່ອນ ແລະ ຮັກສາຄຸນນະພາບຂອງດິນ;

3. ເພື່ອກຳນົດຂອບເຂດ, ປັກຫລັກໝາຍ, ສຳຫລວດຈັດສັນເນື້ອທີ່ ແລະ ສ້າງແລວປ້ອງກັນໄຟປ່າ ໃນເຂດພື້ນຟູປ່າ;
4. ເພື່ອປົກປັກຮັກສາ ແຫຼ່ງແນ່ພັນໄມ້ພື້ນເມືອງ, ຍົກສູງຄຸນນະພາບແນ່ພັນໄມ້ ແລະ ປັບປຸງ ລະບົບແຫຼ່ງແນ່ພັນໄມ້ພື້ນເມືອງ;
5. ເພື່ອເປັນການກະຕຸກຊຸກຍູ້ ແລະ ສົ່ງເສີມໃຫ້ມີການປະກອບສ່ວນ ຂອງບຸກຄົນ, ຄອບຄົວ ແລະ ການຈັດຕັ້ງ ປະກອບສ່ວນເຂົ້າໃນການພື້ນຟູປ່າໄມ້ ຢ່າງຕັ້ງໜ້າ.

ມາດຕາ 3. ລະດັບຄາດໝາຍ

1. ປົກປັກຮັກສາ ເນື້ອທີ່ປ່າໄມ້ ທີ່ມີຢູ່ໃນປະຈຸບັນ ພ້ອມທັງເຮັດໃຫ້ເນື້ອທີ່ປ່າໄມ້ ເພີ່ມຂຶ້ນເປັນລຳດັບດ້ວຍການພື້ນຟູປ່າໄມ້ ແລະ ປູກປ່າໃຫ້ມີເນື້ອທີ່ຄວາມປົກຫຸ້ມປ່າໄມ້ໄດ້ 70%ຂອງເນື້ອທີ່ ທົ່ວປະເທດ ໃນປີ 2020;
2. ຈັດຕັ້ງປະຕິບັດບັນດານິຕິກຳ ໂດຍສະເພາະກົດໝາຍ,ດຳລັດ, ຂໍ້ກຳນົດ, ກົດລະບຽບ, ຄຳສັ່ງ, ຄຳແນະນຳ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງກັບປ່າໄມ້ ໃນການຄຸ້ມຄອງຊັບພະຍາກອນປ່າໄມ້ ຢ່າງມີປະສິດທິຜົນ;
3. ຮັກສາໄດ້ຊັບພະຍາກອນປ່າໄມ້ອັນລ້ຳຄ່າ ເພື່ອພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ປ້ອງກັນ ການເຊາະເຈື່ອນ ແລະ ຮັກສາຄຸນນະພາບຂອງດິນ, ປົກປັກຮັກສາປ່າຍອດນ້ຳ, ປ່າແຫຼ່ງນ້ຳ, ຄວາມອຸດົມສົມບູນ ທາງດ້ານຊີວະນາໆພັນຖິ່ນທີ່ຢູ່ອາໃສຂອງສັດປ່າ, ສິ່ງແວດລ້ອມ ແລະ ເປັນການຮອງຮັບ ໃຫ້ແກ່ຕະຫລາດ ກາກບອນ;
4. ເຂດພື້ນຟູປ່າໄມ້ທຳມະຊາດ ໄດ້ຮັບການກຳນົດຂອບເຂດ ແລະ ປັກຫລັກໝາຍ ຢ່າງຈະແຈ້ງ;
5. ຄຸ້ມຄອງ, ນຳໃຊ້ ແລະ ຂະຫຍາຍ ແຫລ່ງແນ່ພັນໄມ້ພື້ນເມືອງຂອງລາວ ຢ່າງມີປະສິດທິຜົນ ແລະ ຍືນນານ.

ມາດຕາ 4. ນິຍາມ

ການພື້ນຟູປ່າໄມ້ ແມ່ນການພັດທະນາ ປ່າໄມ້ທີ່ຊຸດໂຊມ, ທີ່ດິນປ່າໄມ້ ແລະ ທີ່ດິນປ່າປອກໂຫຼ້ນ ໃຫ້ກາຍເປັນປ່າທີ່ອຸດົມສົມບູນຄືນໃໝ່ ໂດຍນຳໃຊ້ເຕັກນິກວິຊາການ ທີ່ຖືກຕ້ອງ ແລະ ເໝາະສົມ.

ມາດຕາ 5. ອະທິບາຍສັບ

1. ເຂດພື້ນຟູປ່າໄມ້ ໝາຍເຖິງເຂດເນື້ອທີ່ປ່າໄມ້ ທີ່ມີຄວາມປົກຫຸ້ມຂອງປ່າໄມ້ ແຕ່ 20% ລົງມາ, ເຂດເນື້ອທີ່ປ່າໄມ້ທີ່ມີສະພາບເປັນປ່າເຫລົ່າ ຫລື ປ່າຊຸດໂຊມ, ທີ່ດິນປ່າປອກໂຫຼ້ນ ໃນຂອບເຂດທົ່ວປະເທດ ທີ່ຖືກກຳນົດໄວ້ເພື່ອພື້ນຟູໃຫ້ກາຍເປັນປ່າໄມ້ທີ່ອຸດົມສົມບູນຄືນໃໝ່;
2. ຄວາມປົກຫຸ້ມຂອງປ່າໄມ້ 20% ລົງມາ ໝາຍເຖິງການປະເມີນຄວາມປົກຫຸ້ມ ຂອງຕົ້ນໄມ້ ທີ່ມີຄວາມສູງ 05(ຫ້າ) ແມັດຂຶ້ນໄປ ແລະ ມີໜ້າຕ້າງແຕ່ 10(ສິບ) ຊັງຕີແມັດ ຂຶ້ນໄປ.
3. ປ່າພື້ນຟູ ໝາຍເຖິງປ່າໄມ້ ທີ່ຢູ່ໃນສະພາບເຊື່ອມໂຊມ ແຕ່ມີຄວາມອາດສາມາດພື້ນຟູໄດ້ດ້ວຍໂຕມັນເອງໂດຍທຳມະຊາດ ເຊັ່ນ: ປ່າເຫລົ່າອ່ອນ ທີ່ໄດ້ຈັດແບ່ງໄວ້ເພື່ອພື້ນຟູບູລະນະໃຫ້ກາຍເປັນປ່າເຫລົ່າແກ່ ແລະ ກາຍເປັນປ່າທຳມະຊາດທີ່ສົມບູນຄືນໄດ້;
4. ການພື້ນຟູປ່າໄມ້ດ້ວຍທຳມະຊາດ ໝາຍເຖິງການຂະຫຍາຍພັນ ດ້ວຍແນ່ນ, ຮາກ, ເຫງົ້າ ຫຼື ຕໍໄມ້ຕາມທຳມະຊາດ ຂອງພັນໄມ້ຊະນິດຕ່າງໆທີ່ເກີດຢູ່ໃນເຂດພື້ນຟູປ່າໄມ້ ໂດຍການອະນາໄມພື້ນລ່າງ ແລະ

ຕັດສາງ ໃຫ້ຕົ້ນໄມ້ມີການຂະຫຍາຍຕົວ ໄປພ້ອມກັບການປ້ອງກັນໄຟປ່າ ແລະ ປ້ອງກັນ ການບຸກລຸກທຳລາຍ;

5. ການຟື້ນຟູປ່າໄມ້ດ້ວຍການປູກເສີມ ໝາຍເຖິງການປູກເສີມ ພັນໄມ້ຊະນິດຕ່າງໆ ທີ່ ເຫັນວ່າ ເໝາະສົມໂດຍສອດຄ່ອງຕາມຈຸດປະສົງ ແລະ ເປົ້າໝາຍຂອງການຟື້ນຟູປ່າໄມ້ ຢູ່ໃນເຂດຟື້ນຟູ ປ່າໄມ້ທຳມະຊາດ ໂດຍສະເພາະບ່ອນທີ່ຄວາມໜາແໜ້ນຂອງຕົ້ນໄມ້ຕ່ຳ, ບ່ອນທີ່ການກະຈາຍ ຂອງຊະນິດພັນໄມ້ທີ່ເກີດຕາມທຳມະຊາດບໍ່ສະໝ່ຳສະເໝີ ຫຼື ບາງຊະນິດພັນໄມ້ດັ້ງເດີມ ທີ່ມີຢູ່ໃນ ເຂດດັ່ງກ່າວ ທີ່ມີຄວາມສ່ຽງຕໍ່ການໃກ້ຈະສູນພັນ ຫຼື ຖືກສູນພັນແລ້ວ ແຕ່ເຫັນມີຄວາມຈຳເປັນ ຕ້ອງໄດ້ ຮັບການຟື້ນຟູຄືນ;
6. ປ່າເຫລົ່າ ໝາຍເຖິງເນື້ອທີ່ປ່າໄມ້ ທີ່ມີການຖາງປ່າເຮັດໄຮ່ ຫລື ຖືກບຸກລຸກທຳລາຍດ້ວຍຮູບການຕ່າງໆ ເປັນເວລາຫລາຍປີມາແລ້ວ, ເຂດດັ່ງກ່າວສາມາດມີໂອກາດກາຍເປັນປ່າທຳມະຊາດທີ່ອຸດົມ ສົມບູນ;
7. ປ່າໄມ້ຊຸດໂຊມ ໝາຍເຖິງປ່າໄມ້ ທີ່ຖືກທຳລາຍຢ່າງໜັກເຊັ່ນ: ເນື້ອທີ່ດິນບໍ່ມີປ່າ ຫລື ເນື້ອທີ່ດິນປ່າປອກໂຫຼ້ນ ຊຶ່ງຖືກຈັດແບ່ງໄວ້ເພື່ອປູກຕົ້ນໄມ້ຄືນໃໝ່, ການຜະລິດ ກະສິກຳ - ປ່າໄມ້ - ລ້ຽງສັດ ແບບຖາວອນ ຫລື ນຳໃຊ້ ເຂົ້າໃນເປົ້າໝາຍອື່ນ ຕາມແຜນພັດທະນາເສດຖະກິດ-ສັງຄົມ;
8. ຊີວະນາໆພັນ ໝາຍເຖິງຄວາມຫລາກຫລາຍຂອງລະບົບນິເວດ, ຊະນິດ, ຈຳນວນ ແລະ ແນວພັນ ຂອງສິ່ງທີ່ມີຊີວິດ ເຊັ່ນ: ພືດ, ສັດ, ແມງໄມ້ ແລະ ຈຸລິນຊີ ຢູ່ໃນຂອບເຂດທຳມະຊາດໃດໜຶ່ງ;
9. ລະບົບນິເວດ ໝາຍເຖິງສາຍພົວພັນລະຫວ່າງສິ່ງທີ່ມີຊີວິດ ແລະ ສິ່ງບໍ່ມີຊີວິດ ທີ່ຄົງຕົວຢູ່ຕາມທຳມະຊາດ;
10. ທີ່ດິນປ່າປອກໂຫລ້ນ ໝາຍເຖິງເນື້ອທີ່ດິນປ່າໄມ້ທີ່ບໍ່ມີຕົ້ນໄມ້ ຊຶ່ງເກີດຂຶ້ນຍ້ອນທຳມະຊາດ ຫລື ການທຳລາຍ ຂອງຄົນ;
11. ທີ່ດິນປ່າຊຸດໂຊມ ໝາຍເຖິງເນື້ອທີ່ດິນປ່າໄມ້ ທີ່ໄດ້ຖືກທຳລາຍຢ່າງໜັກ ແລະ ເນື່ອງນິດລຽນຕິດ ທີ່ເຮັດໃຫ້ເສັຍຄວາມດຸນດ່ຽງ ທາງດ້ານອິນຊີວັດຖຸ ຊຶ່ງເຮັດໃຫ້ປ່າໄມ້ ບໍ່ສາມາດຟື້ນຄືນເອງຕາມ ທຳມະຊາດ ມາເປັນປ່າອຸດົມສົມບູນໄດ້ອີກ. ພືດ ແລະ ຕົ້ນໄມ້ທີ່ເກີດໃນດິນ ປ່າໄມ້ຊຸດໂຊມສ່ວນໃຫຍ່ຈະແມ່ນຫຍ້າຄາ, ໄມ້ພຸ່ມ ໄມ້ປ່ອງຂະໜາດນ້ອຍ ຫລື ຕົ້ນແຂມ ແລະ ອື່ນໆ;

## ໝວດທີ II

### ການກຳນົດເຂດ, ຮູບແບບ ແລະ ຫລັກການຟື້ນຟູປ່າໄມ້

**ມາດຕາ 6. ການກຳນົດເຂດຟື້ນຟູປ່າໄມ້**

ເຂດຟື້ນຟູ ປ່າໄມ້ ກຳນົດເອົາເນື້ອທີ່ 0,5(ສູນຈຸດຫ້າ)ເຮັກຕາຂຶ້ນໄປ ໂດຍເລັ່ງໃສ່ເຂດປ່າເຫລົ່າ ຫລື ປ່າຊຸດໂຊມ, ປ່າໄມ້ທຳມະຊາດ ທີ່ມີຄວາມປົກຫຸ້ມຂອງປ່າໄມ້ແຕ່ 20% ລົງມາ ແລະ ທີ່ດິນປ່າປອກໂຫຼ້ນ ບົນພື້ນຖານການສຳຫລວດ ສະພາບປ່າໄມ້, ໝາຍເຂດແດນ, ເກັບກຳ ແລະ ບັນທຶກຂໍ້ມູນກ່ຽວກັບ ຊະນິດພັນໄມ້, ຄວາມອາດສາມາດ ໃນການສືບພັນ ຕາມທຳມະຊາດ ແລະ ປັດໃຈອື່ນໆ ທີ່ກ່ຽວຂ້ອງ ກັບກິດຈະກຳທີ່ຈະກຳນົດເອົາພື້ນທີ່ດັ່ງກ່າວ ເປັນເຂດຟື້ນຟູດ້ວຍທຳມະຊາດ ຫລື ຟື້ນຟູດ້ວຍການປູກເສີມ.

**ມາດຕາ 7. ຮູບແບບການຟື້ນຟູປ່າໄມ້**

ການຟື້ນຟູປ່າໄມ້ ສາມາດດຳເນີນ ດ້ວຍສອງຮູບແບບຕົ້ນຕໍ ຄື: ການຟື້ນຟູປ່າໄມ້ ດ້ວຍທຳມະຊາດຂອງມັນເອງ ແລະ ການຟື້ນຟູປ່າໄມ້ ດ້ວຍການປູກເສີມ.

1. ການຟື້ນຟູປ່າໄມ້ດ້ວຍທຳມະຊາດ ສາມາດກຳນົດເປັນບໍລິເວນແຄບ ຫລື ກວ້າງ ຕາມເງື່ອນໄຂຕົວຈິງຂອງຂໍ້ມູນທີ່ໄດ້ຈາກການສຳຫລວດ ແລະ ວາງແຜນເພື່ອຟື້ນຟູ.
2. ການຟື້ນຟູປ່າໄມ້ດ້ວຍການປູກເສີມ ສາມາດດຳເນີນເປັນບາງເຂດ ຫລື ບໍລິເວນທີ່ເຫັນວ່າເຂດດັ່ງກ່າວ ເປັນພື້ນທີ່ທີ່ຊຸດໂຊມ, ຄວາມໜາແໜ້ນຂອງຕົ້ນໄມ້ຕໍ່າ, ການກະຈາຍພັນໄມ້ ຕາມທຳມະຊາດ ບໍ່ສະມໍ່າສະເໝີ ແລະ ບໍ່ເໝາະສົມແກ່ການຟື້ນຟູດ້ວຍຮູບການອື່ນ.

---

ມາດຕາ 8. ຫຼັກການ ຟື້ນຟູປ່າໄມ້

ການຟື້ນຟູປ່າໄມ້ ຕ້ອງປະຕິບັດຕາມ ຫລັກການຕົ້ນຕໍ ດັ່ງນີ້:

1. ສຳຫລວດ ເກັບກຳຂໍ້ມູນສະພາບປ່າໄມ້, ຄວາມໜາແໜ້ນຂອງປ່າໄມ້, ການສືບພັນໄມ້ໃນ ເນື້ອທີ່ປ່າໄມ້ທີ່ຈະດຳເນີນການຟື້ນຟູ;
2. ກຳນົດໝາຍຂອບເຂດພ້ອມດ້ວຍປັກຫລັກໝາຍ ໃນພື້ນທີ່ຕົວຈິງແລະກຳນົດໃນແຜນທີ່;
3. ກຳນົດຊະນິດພັນໄມ້ທີ່ແທດເໝາະກັບສະພາບປ່າດັ່ງກ່າວ;
4. ສ້າງເປັນແຜນການ ຫລື ໂຄງການຟື້ນຟູປ່າ ໂດຍມີການສະໜັບສະໜູນ ດ້ານທຶນຮອນເຂົ້າໃນວຽກງານຟື້ນຟູປ່າ;
5. ດຳເນີນການຄຸ້ມຄອງ ແລະ ປົວລະບັດຮັກສາຢ່າງເຂັ້ມງວດ;
6. ຂຶ້ນທະບຽນເປັນປ່າຟື້ນຟູຕາມລະບຽບການ.

ມາດຕາ 9. ການຟື້ນຟູປ່າໄມ້ ດ້ວຍທຳມະຊາດ.

ການຟື້ນຟູປ່າໄມ້ ດ້ວຍທຳມະຊາດ ແມ່ນການນຳໃຊ້ ມາດຕະການຄຸ້ມຄອງ ແລະ ປົວລະບັດຮັກສາ ສະຖານະພາບຂອງປ່າໄມ້ ທີ່ໄດ້ກຳນົດເປັນເຂດຟື້ນຟູປ່າໄມ້ທຳມະຊາດ ໂດຍສະເພາະ ແມ່ນມາດຕະການປ້ອງກັນ ບໍ່ໃຫ້ເກີດມີໄຟໄໝ້ລາມປ່າ, ບໍ່ໃຫ້ມີການບຸກລຸກທຳລາຍຂອງສັດລ້ຽງ ຫຼື ການດຳເນີນກິດຈະການຕ່າງໆ ແລະ ອື່ນໆ ເພື່ອແນໃສ່ເຮັດໃຫ້ເບ້ຍໄມ້ ຫຼື ຕົ້ນໄມ້ນ້ອຍ ສາມາດ ຟື້ນຟູ ແລະ ຈະເລີນເຕີບໂຕ ດ້ວຍຕົວມັນເອງຕາມທຳມະຊາດ.

ມາດຕາ 10. ການຟື້ນຟູປ່າໄມ້ ດ້ວຍການປູກເສີມ.

ການຟື້ນຟູປ່າໄມ້ ດ້ວຍການປູກເສີມ ແມ່ນການນຳເອົາແກ່ນ, ເບ້ຍໄມ້ ທີ່ໄດ້ຈາກ ທຳມະຊາດ ຫຼື ຈາກການຂະຫຍາຍພັນ ທາງດ້ານຊີວະສາດ ຂອງຊະນິດພັນໄມ້ ທີ່ມີຄຸນຄ່າ ທາງດ້ານ ເສດຖະກິດ, ປ້ອງກັນສະພາບແວດລ້ອມ ຫຼື ບາງຊະນິດພັນໄມ້ ທີ່ມີຖິ່ນກຳເນີດດັ້ງເດີມ ປູກເສີມໃສ່ ເຂດທີ່ໄດ້ກຳນົດໄວ້ ເປັນເຂດຟື້ນຟູປ່າໄມ້ ເພື່ອແນໃສ່ ປັບປຸງໂຄງປະກອບສ້າງ ແລະ ຄຸນນະພາບ ຂອງປ່າໄມ້ໃຫ້ອຸດົມສົມບູນ ແລະ ເຮັດໜ້າທີ່ ຕາມຈຸດປະສົງ ຂອງການ ຟື້ນຟູປ່າໄມ້. –

ມາດຕາ 11. ການກຳນົດເບ້ຍໄມ້ ທີ່ຈະນຳໄປປູກ ໃນເຂດຟື້ນຟູປ່າ.

ເບ້ຍໄມ້ ທີ່ຈະນຳໄປປູກໃນເຂດຟື້ນຟູປ່າ ຕ້ອງແມ່ນຊະນິດພັນໄມ້ທ້ອງຖິ່ນ, ພັນໄມ້ພື້ນເມືອງທີ່ເໝາະສົມກັບດິນຟ້າອາກາດຂອງພື້ນທີ່ນັ້ນ ຫລື ຊະນິດພັນທີ່ມີຄວາມສ່ຽງຕໍ່ການໃກ້ຈະສູນພັນ ຫລື ຖືກສູນພັນແລ້ວ; ຕ້ອງໄດ້ຄັດເລືອກເອົາເບ້ຍໄມ້ ທີ່ແຂງແຮງສົມບູນ ຊຶ່ງມີອາຍຸປະມານ 01(ໜຶ່ງ)ປີ ຂຶ້ນໄປ.

ມາດຕາ 12. ການຟື້ນຟູປ່າໃນປ່າປ້ອງກັນ

ການຟື້ນຟູປ່າໄມ້ ຢູ່ໃນປ່າປ້ອງກັນ ແມ່ນການຄັດເລືອກເອົາ ຊະນິດພັນໄມ້ ແລະ ພືດຊະນິດຕ່າງໆ ທີ່ສາມາດຕອບສະໜອງຕາມຈຸດປະສົງ ແລະ ເປົ້າໝາຍຂອງການຟື້ນຟູປ່າໄມ້ ຢູ່ໃນເຂດປ່າດັ່ງກ່າວໂດຍສະເພາະແມ່ນເພື່ອປັບປຸງຄຸນນະພາບປ່າໄມ້ ແລະ ທີ່ດິນປ່າໄມ້ ດ້ວຍການ ຟື້ນຟູເຂດປ່າເຫລົ່າ, ປ່າຊຸດໂຊມ ແລະ ເຂດທີ່ດິນປ່າປອກໂຫລ້ນ. ແນໃສ່ຕອບສະໜອງ ໃຫ້ແກ່ການປ້ອງກັນແຫຼ່ງນໍ້າ, ປ້ອງກັນການເຊາະເຈື່ອນຂອງດິນ, ປ້ອງກັນໄພທຳມະຊາດ, ປ້ອງກັນສະພາບແວດລ້ອມ, ເຂດຍຸດທະສາດປ້ອງກັນຊາດ ແລະ ອື່ນໆ.

ມາດຕາ 13. ການຟື້ນຟູປ່າໃນປ່າສະຫງວນ.

ການຟື້ນຟູປ່າໄມ້ ຢູ່ໃນປ່າສະຫງວນ ແມ່ນການຄັດເລືອກເອົາ ຊະນິດພັນໄມ້ ແລະ ພືດຊະນິດຕ່າງໆ ທີ່ສາມາດຕອບສະໜອງຕາມຈຸດປະສົງ ແລະ ເປົ້າໝາຍຂອງການຟື້ນຟູປ່າໄມ້ ຢູ່ໃນເຂດປ່າດັ່ງກ່າວ ໂດຍສະເພາະແມ່ນເພື່ອປັບປຸງຄຸນນະພາບປ່າໄມ້ ແລະ ທີ່ດິນປ່າໄມ້ ແນໃສ່ອະນຸລັກລະບົບນິເວດຂອງປ່າໄມ້, ເພີ່ມຄວາມຫຼາກຫຼາຍ ທາງດ້ານຊີວະນາໆພັນ; ພັນພືດ, ພັນສັດ, ອະນຸລັກມໍລະດົກທາງດ້ານວັດທະນະທຳ, ປະຫວັດສາດ, ການທ່ອງທ່ຽວ, ການສຶກສາ ຄົ້ນຄວ້າທົດລອງ ທາງດ້ານວິທະຍາສາດ ແລະ ສິ່ງທີ່ມີຄຸນຄ່າ ຢູ່ໃນຂອບເຂດປ່າສະຫງວນ.

ມາດຕາ 14. ການຟື້ນຟູປ່າໃນປ່າຜະລິດ

ການຟື້ນຟູປ່າໄມ້ ຢູ່ໃນປ່າຜະລິດ ແມ່ນການຄັດເລືອກເອົາ ຊະນິດພັນໄມ້ ແລະ ພືດຊະນິດຕ່າງໆ ທີ່ສາມາດຕອບສະໜອງຕາມຈຸດປະສົງ ແລະ ເປົ້າໝາຍຂອງການຟື້ນຟູປ່າໄມ້ ຢູ່ໃນເຂດປ່າດັ່ງກ່າວ. ແນໃສ່ເພື່ອເພີ່ມປະລິມານ ແລະ ຄຸນນະພາບຂອງໄມ້ ແລະ ຜະລິດຕະພັນປ່າໄມ້ ເພື່ອຮັບປະກັນ ໃຫ້ແກ່ການນຳໃຊ້ ແລະ ຕອບສະໜອງ ຄວາມຮຽກຮ້ອງຕ້ອງການ ວັດຖຸດິບດ້ານໄມ້ ແລະ ຜະລິດຕະພັນປ່າໄມ້ຢ່າງພຽງພໍ ເຂົ້າໃນວຽກງານພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ.

## ໝວດທີ III
## ການເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດການຟື້ນຟູປ່າໄມ້

ມາດຕາ 15. ການກຳນົດ ແລະ ໝາຍຂອບເຂດ

ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ (ຂະແໜງປ່າໄມ້, ກອງຄຸ້ມຄອງປ່າສະຫງວນແຫ່ງຊາດ) ປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ ດຳເນີນການສຳຫລວດ, ກຳນົດເຂດຟື້ນຟູປ່າໄມ້, ປັກຫລັກໝາຍ, ຕິດປ້າຍສະແດງຂອບເຂດເນື້ອທີ່ ແລະ ກຳນົດເຂົ້າໃນແຜນທີ່ຂອງແຕ່ລະປະເພດປ່າໄມ້.

ມາດຕາ 16. ການສ້າງແຜນການ

ພາຍຫລັງ ທີ່ໄດ້ກຳນົດເປັນເຂດຟື້ນຟູປ່າໄມ້ແລ້ວຂະແໜງປ່າໄມ້, ກອງຄຸ້ມຄອງປ່າສະຫງວນແຫ່ງຊາດ ເປັນເຈົ້າການສ້າງແຜນການຟື້ນຟູປ່າໄມ້ ໂດຍສອດຄ່ອງກັບ ລະບຽບກົດໝາຍ ດ້ວຍການກຳນົດຈຸດປະສົງ ລະດັບຄາດໝາຍ ຂອງການຟື້ນຟູປ່າໄມ້ ໃນແຕ່ລະປະເພດປ່າ, ພ້ອມທັງ ກຳນົດເຕັກນິກ, ວິທີການດຳເນີນງານ ແລະ ມາດຕະການຕ່າງໆ ທີ່ຈະນຳໃຊ້ເຂົ້າໃນການຈັດຕັ້ງ ປະຕິບັດ(ແຜນງານ, ແຜນເງິນ ແລະ ແຜນຄົນ) ຕາມເງື່ອນໄຂຕົວຈິງ ໂດຍຜ່ານການຮັບຮອງ ຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ.

ມາດຕາ 17. ການປະຕິບັດແຜນການ

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເປັນເຈົ້າການສົມທົບກັບ ອົງການປົກຄອງບ້ານ ໂດຍການເຂົ້າຮ່ວມຂອງປະຊາຊົນ ໃນການຈັດຕັ້ງປະຕິບັດ ແຜນການຟື້ນຟູປ່າ ຕາມທີ່ໄດ້ກຳນົດໄວ້ໃນແຜນການຟື້ນຟູປ່າປະຈຳປີ ທີ່ໄດ້ຜ່ານການຮັບຮອງແລ້ວ.

ມາດຕາ 18. ການບົວລະບັດຮັກສາ

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເປັນເຈົ້າການສົມທົບກັບ ອົງການປົກຄອງບ້ານ ແລະ ປະຊາຊົນ ເອົາໃຈໃສ່ຄຸ້ມຄອງ ເຂດຟື້ນຟູປ່າໄມ້ ທີ່ໄດ້ກຳນົດຂຶ້ນ ແລະ ມີການຈັດຕັ້ງປະຕິບັດ ໃນແຕ່ລະໄລຍະ ຄວນໄດ້ເອົາໃຈໃສ່ ໃນການບົວລະບົດຮັກສາ, ອະນາໄມພື້ນທີ່, ຕັດສາງຂະຫຍາຍໄລຍະ ຕາມທີ່ໄດ້ກຳນົດໃນຫລັກວິຊາການ, ເພື່ອຮັບປະກັນ ໃຫ້ຕົ້ນໄມ້ນ້ອຍ ທີ່ຟື້ນຟູຕາມທຳມະຊາດ ຫລື ຕົ້ນໄມ້ ທີ່ນຳມາປູກເສີມ ສາມາດຈະເລີນເຕີບໂຕໄດ້.

ມາດຕາ 19. ການປ້ອງກັນໄຟປ່າ

ເຂດຟື້ນຟູປ່າທີ່ໄດ້ກຳນົດຂຶ້ນ ແລະ ຈັດຕັ້ງປະຕິບັດ ຄວນໄດ້ເອົາໃຈໃສ່ ໃນການປ້ອງກັນໄຟໄໝ້ລາມປ່າ ອັນສືບເນື່ອງມາຈາກຫລາຍສາຍເຫດ ເປັນຕົ້ນແມ່ນ ການດັງໄຟໃນປ່າເພື່ອທຸງຕົ້ມ, ການຈູດອະນາໄມພື້ນທີ່ ແລະ ອື່ນໆ. ການສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ ໃຫ້ປະຕິບັດຕາມ ມາດຕາ 29 ຂອງກົດໝາຍ ວ່າດ້ວຍປ່າໄມ້ຢ່າງເຂັ້ມງວດ.

ມາດຕາ 20. ງົບປະມານນຳໃຊ້ໃນວຽກງານຟື້ນຟູປ່າ

ວຽກງານຟື້ນຟູປ່າໄມ້ ແມ່ນນຳໃຊ້ຈາກງົບປະມານຂອງລັດ, ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ໂຄງການນຳໃຊ້ຊັບພະຍາກອນປ່າໄມ້, ການປະກອບສ່ວນ ຂອງບຸກຄົນ, ຄອບຄົວ, ລວມໝູ່, ການຈັດຕັ້ງ, ອົງການຈັດຕັ້ງສັງຄົມທັງພາຍໃນ ແລະ ຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ອື່ນໆ.

ມາດຕາ 21. ການຕິດຕາມ ແລະ ປະເມີນຜົນ

ການຈັດຕັ້ງປະຕິບັດການຟື້ນຟູປ່າໄມ້ ຕ້ອງໄດ້ມີການຕິດຕາມ ແລະ ປະເມີນຜົນ ເປັນແຕ່ລະໄລຍະ ຕາມແຜນການທີ່ໄດ້ຖືກຮັບຮອງເອົາ ໂດຍແມ່ນອົງການທີ່ມີສິດກ່ຽວຂ້ອງ ໃນການຕິດຕາມແລະ ປະເມີນຜົນ ຕາມແຕ່ລະໄລຍະ ຂອງແຜນການທີ່ໄດ້ກຳນົດໄວ້.

ມາດຕາ 22. ການຂຶ້ນທະບຽນ

1. ເຂດຟື້ນຟູປ່າໄມ້ ທີ່ມີເນື້ອທີ່ແຕ່ 05(ຫ້າ)ເຮັກຕາລົງມາ ແມ່ນຫົວໜ້າຫ້ອງການກະສິກຳແລະປ່າໄມ້ເມືອງ ເປັນຜູ້ເຊັນ ຮັບຮອງໃບທະບຽນການຟື້ນຟູປ່າໄມ້.
2. ເຂດຟື້ນຟູປ່າໄມ້ ທີ່ມີເນື້ອທີ່ຫຼາຍກວ່າ 05(ຫ້າ)ເຮັກຕາຂຶ້ນໄປ ແມ່ນຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນ ເປັນຜູ້ລົງລາຍເຊັນ ຮັບຮອງໃບທະບຽນຕາມການຄົ້ນຄ້ວາ ນຳສະເໜີ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງທີ່ກ່ຽວຂ້ອງ.

## ໝວດທີ IV
## ການສົ່ງເສີມການຟື້ນຟູປ່າ

ມາດຕາ 23. ການສົ່ງເສີມຟື້ນຟູປ່າໄມ້.

ລັດສົ່ງເສີມ ບຸກຄົນ, ຄອບຄົວ ແລະ ການຈັດຕັ້ງດຳເນີນກິດຈະການ ການຟື້ນຟູປ່າໄມ້ທຳມະຊາດທີ່ມີສະພາບຊຸດໂຊມ, ປ່າເຫລົ່າ ດ້ວຍການປູກເສີມ ແລະ ບູລະນະ ໃຫ້ກາຍເປັນປ່າດົງດິບໜາຄືນໃໝ່ ແລະ ຈະໄດ້ຮັບນະໂຍບາຍສົ່ງເສີມ ຕາມລະບຽບການ.

ມາດຕາ 24. ການມີສ່ວນຮ່ວມ

ບຸກຄົນ, ຄອບຄົວ ແລະ ການຈັດຕັ້ງ ມີພັນທະ ແລະ ປະກອບສ່ວນ ທຶນຮອນ ແລະ ເຫື່ອແຮງຂອງຕົນເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ຟື້ນຟູປ່າໄມ້ໃຫ້ອຸດົມສົມບູນ.

ມາດຕາ 25. ສິດຊົມໃຊ້ ປ່າຟື້ນຟູ

ບຸກຄົນ, ຄອບຄົວ ແລະ ການຈັດຕັ້ງ ທີ່ໄດ້ສຸມທຶນຮອນ ແລະ ເຫື່ອແຮງຂອງຕົນ ເຂົ້າໃນການຟື້ນຟູປ່າທຳມະຊາດ ຈົນເຮັດໃຫ້ປ່າດັ່ງກ່າວ ກາຍເປັນປ່າໄມ້ທີ່ອຸດົມສົມບູນຄືນ ຈະມີສິດຊົມໃຊ້ໄມ້ ແລະ ຜົນປະໂຫຍດຕ່າງໆ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບການຂອງລັດ ທີ່ໄດ້ປະກາດໃຊ້ເປັນແຕ່ລະໄລຍະ.

## ໝວດທີ V
## ສິດ ແລະ ໜ້າທີ່ ໃນການຄຸ້ມຄອງ ເຂດຟື້ນຟູປ່າ

ມາດຕາ 26. ສິດ ແລະ ໜ້າທີ່ ຂອງ ກົມປ່າໄມ້

1 ເປັນເສນາທິການໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ໃນການຜັນຂະຫຍາຍ ແລະ ຈັດຕັ້ງ ປະຕິບັດແນວທາງນະໂຍບາຍ ແລະ ແຜນງານລວມ ຂອງລັດຖະບານ ໃຫ້ເປັນໂຄງການ ແລະ ແຜນການອັນລະອຽດ ເພື່ອຟື້ນຟູປ່າ ໃນຂອບເຂດທົ່ວປະເທດ;
2 ກຳນົດມາດຕະການ ໃນການຈັດຕັ້ງ ຜັນຂະຫຍາຍ ກົດໝາຍ, ມະຕິ, ຄຳສັ່ງ ຂອງ ລັດ ດ້ວຍການສ້າງບັນດາລະບຽບການ, ຂໍ້ກຳນົດ, ຄຳແນະນຳ ແລະ ຄູ່ມື ກ່ຽວກັບ ການຟື້ນຟູປ່າ;
3 ຄົ້ນຄ້ວາ ແລະ ນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີ ເຂົ້າໃນການຈັດຕັ້ງປະຕິບັດການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າຟື້ນຟູ;

4 ປະສານສົມທົບ ກັບ ບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນ ທີ່ກ່ຽວຂ້ອງອື່ນໆ ໃນການຕິດຕາມ ກວດກາ ແລະ ປະເມີນຜົນ ວຽກງານຟື້ນຟູປ່າ;

5 ຝຶກອົບຮົມ ເຕັກນິກວິຊາການ ກ່ຽວກັບການຟື້ນຟູປ່າໄມ້ ໃຫ້ແກ່ ວິຊາການຂັ້ນທ້ອງຖິ່ນ;

6 ພົວພັນ ແລະ ຮ່ວມມືກັບສາກົນ ໃນການແລກປ່ຽນ ຂໍ້ມູນ ຂ່າວສານ, ເຕັກນິກ-ວິຊາການ ແລະ ຍາດແຍ່ງທຶນຮອນ ເຂົ້າໃນວຽກງານຟື້ນຟູປ່າໄມ້ ໃນຂອບເຂດ ທົ່ວປະເທດ.

---

ມາດຕາ 27. ສິດ ແລະ ໜ້າທີ່ ຂອງ ຂະແໜງ ປ່າໄມ້ແຂວງ, ນະຄອນ

1 ເປັນເສນາທິການ ໃຫ້ແກ່ກົມປ່າໄມ້ ແລະ ພະແນກ ກະສິກຳ ແລະ ປ່າໄມ້ ໃນການວາງແຜນ, ຕິດຕາມ ກວດກາ ແລະ ຈັດຕັ້ງຄຸ້ມຄອງມະຫາພາກ ຕາມສາຍຕັ້ງ ຂອງ ຂະແໜງການປ່າໄມ້ ກ່ຽວກັບ ວຽກງານຟື້ນຟູປ່າ;

2 ປະສານສົມທົບ ກັບ ພາກສ່ວນທີ່ກ່ຽວຂ້ອງ ໃນທ້ອງຖິ່ນຂອງຕົນ ເພື່ອຈັດຕັ້ງ ຄຸ້ມຄອງ, ຟື້ນຟູບູລະນະ ແລະ ປົກປັກຮັກສາ ຊັບພະຍາກອນ ປ່າໄມ້ ຢູ່ໃນເຂດຟື້ນຟູປ່າ;

3 ຄົ້ນຄວ້າ ແລະ ມີຄຳເຫັນ ເພື່ອນຳສະເໜີ ບັນຫາຕ່າງໆ ຕໍ່ ພະແນກ ກະສິກຳ ແລະ ປ່າໄມ້ ກ່ຽວກັບ ການດຳເນີນ ກິດຈະການຕ່າງໆ ຢູ່ໃນເຂດຟື້ນຟູປ່າ ຕາມ ການສະເໜີ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ;

4 ຝຶກອົບຮົມ ດ້ານວິຊາການ ໃຫ້ແກ່ ພະນັກງານ ວິຊາການ ທີ່ມີໜ້າທີ່ ກ່ຽວຂ້ອງ ແລະ ປະຊາຊົນໃນ ການດຳເນີນ ວຽກງານ ຟື້ນຟູປ່າ;

5 ຊີ້ນຳ ແລະ ຈັດຕັ້ງການຕິດຕາມກວດກາ ແລະ ປະເມີນຜົນວຽກງານຕ່າງໆໃນເຂດຟື້ນຟູປ່າ.

ມາດຕາ 28. ສິດ ແລະ ໜ້າທີ່ ຂອງ ຫ້ອງການກະສິກຳແລະ ປ່າໄມ້ເມືອງ

1. ເປັນເສນາທິການໃຫ້ ພະແນກກະສິກຳ ແລະ ປ່າໄມ້ ໃນການສ້າງ ກົດລະບຽບ ສະເພາະ ເພື່ອຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ປ່າຟື້ນຟູ ໃຫ້ສອດຄ່ອງ ກັບ ລະບຽບກົດໝາຍ ທີ່ລັດວາງອອກໃນແຕ່ລະໄລຍະ;
2. ຈັດຕັ້ງປະຕິບັດ ມະຕິຄຳສັ່ງ ຂອງ ຂັ້ນເທິງ ກ່ຽວກັບ ການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ການຟື້ນຟູປ່າ;
3. ສະຫຼຸບ ລາຍງານ ກ່ຽວກັບ ການຄຸ້ມຄອງ ແລະ ການດຳເນີນ ກິດຈະການປ່າໄມ້ ໃນເຂດ ປ່າຟື້ນຟູ ຕາມ ສິດ ແລະ ໜ້າທີ່ຂອງຕົນ;
4. ຕິດຕາມ ກວດກາ ແລະ ປະເມີນຜົນ ກ່ຽວກັບ ການດຳເນີນ ວຽກງານ ໃນເຂດປ່າຟື້ນຟູ;
5. ສ້າງແຜນການ ດຳເນີນງານ ປະຈຳປີ ສຳລັບ ແຕ່ລະເຂດ ຄຸ້ມຄອງ ຂອງເຂດປ່າຟື້ນຟູ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
6. ປະສານ ສົມທົບກັບ ບັນດາ ພາກສ່ວນ ກ່ຽວຂ້ອງຕ່າງໆ ໃນການຈັດຕັ້ງປະຕິບັດ ວຽກງານ ຄຸ້ມຄອງ ຢູ່ໃນເຂດ ປ່າຟື້ນຟູ.

ມາດຕາ 29. ສິດ ແລະ ໜ້າທີ່ ຂອງການຈັດຕັ້ງ ປ່າໄມ້ບ້ານ

1. ເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ມະຕິ, ຄຳສັ່ງ ແລະ ລະບຽບກົດໝາຍຕ່າງໆ ທີ່ຂັ້ນເທິງ ວາງອອກ;

2. ຈັດຕັ້ງປະຊາຊົນ ເຂົ້າຮ່ວມ ໃນການປະຕິບັດ ບັນດາກິດຈະກຳ ວຽກງານຟື້ນຟູປ່າໄມ້ ທີ່ກຳນົດໄວ້ ໃນແຜນການຟື້ນຟູປ່າ;
3. ຈັດຕັ້ງປະຊາຊົນເຂົ້າຮ່ວມ ໃນ ການຕິດຕາມ ກວດກາ ແລະ ປ້ອງກັນ ບໍ່ໃຫ້ມີການລະເມີດ ລະບຽບ ກົດໝາຍ ທີ່ຈະນຳ ຜົນເສຍຫາຍ ແກ່ ຊັບພະຍາກອນປ່າໄມ້ ແລະ ສິ່ງແວດລ້ອມ ຢູ່ໃນເຂດຟື້ນຟູປ່າ;
4. ລາຍງານ ສະພາບການຕ່າງໆ ທີ່ເກີດຂຶ້ນ ຢູ່ໃນເຂດຟື້ນຟູປ່າ ໃຫ້ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເປັນແຕ່ລະໄລຍະ;
5. ຄຸ້ມຄອງ ການນຳໃຊ້ ຊັບພະຍາກອນປ່າໄມ້ ຕາມ ປະເພນີ ແລະ ການຊົມໃຊ້ຕ່າງໆ ຂອງ ປະຊາຊົນ ຕາມ ລະບຽບກົດໝາຍ.

## ໝວດທີ VI

### ຂໍ້ຫ້າມ, ນະໂຍບາຍ ແລະ ມາດຕະການ

#### ມາດຕາ 30. ຂໍ້ຫ້າມ

ຫ້າມດຳເນີນກິດຈະການຕ່າງໆ ໃນເຂດຟື້ນຟູປ່າ ດັ່ງນີ້:

1. ປ່ຽນແປງ ຍົກຍ້າຍຫຼັກໝາຍເຂດແດນ ຂອງເຂດຟື້ນຟູປ່າ ໂດຍບໍ່ໄດ້ຮັບອະນຸຍາດ.
2. ປ່ຽນແປງຮູບແບບ ການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ໄດ້ກຳນົດໄວ້ ໃນແຜນການຟື້ນຟູປ່າຢ່າງເດັດຂາດ, ເວັ້ນເສຍແຕ່ໄດ້ຮັບອະນຸຍາດ.
3. ບຸກເບີກ, ຕັດ, ຖາງ, ຈູດ ຫຼື ທຸກຮູບການທີ່ຈະກໍ່ໃຫ້ເກີດ ໄຟໄໝ້ລາມປ່າ ຫຼື ເປັນການທຳລາຍ ເຂດປ່າໄມ້ທີ່ໄດ້ຮັບການຟື້ນຟູໃໝ່ ເສຍຫາຍ;
4. ດຳເນີນກິດຈະກຳຕ່າງໆ ທີ່ເຫັນວ່າ ຈະເປັນຜົນກະທົບ ອັນບໍ່ດີ ຕໍ່ປ່າໄມ້, ດິນ, ສັດນ້ຳ-ສັດປ່າ, ສິ່ງແວດລ້ອມ ແລະ ອື່ນໆ ຢູ່ໃນເຂດຟື້ນຟູປ່າ.

#### ມາດຕາ 31. ນະໂຍບາຍ ຕໍ່ ຜູ້ມີຜົນງານ

ບຸກຄົນ, ຄອບຄົວ ຫຼື ການຈັດຕັ້ງ ທີ່ມີຜົນງານ ໃນ ການຄຸ້ມຄອງ, ປ້ອງກັນ ແລະ ພັດທະນາຊັບພະຍາກອນປ່າໄມ້ ຢູ່ໃນເຂດຟື້ນຟູປ່າ ຫຼື ມີສ່ວນຮ່ວມໃນການປ້ອງກັນ ແລະ ສະກັດກັ້ນໄຟໄໝ້ລາມປ່າ, ການຖາງ, ການຈູດ ຫຼື ທຸກຮູບການ ທີ່ເປັນການກະທຳຜິດ ຕໍ່ລະບຽບກົດໝາຍ ຈະໄດ້ຮັບການຕອບແທນດ້ວຍ ກຽດຕິຄຸນປະເພດຕ່າງໆ, ການຍ້ອງຍໍ ຊົມເຊີຍ ແລະ ບຳເນັດ ຕາມລະບຽບການ.

#### ມາດຕາ 32. ມາດຕະການ ຕໍ່ຜູ້ລະເມີດ

ບຸກຄົນ, ຄອບຄົວ ຫຼື ການຈັດຕັ້ງ ທີ່ລະເມີດຕໍ່ ກົດໝາຍ ວ່າດ້ວຍປ່າໄມ້, ລະບຽບການ ກ່ຽວກັບການຄຸ້ມຄອງ ປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ການຟື້ນຟູປ່າ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງກັບປ່າໄມ້ ຈະຖືກປະຕິບັດ ມາດຕະການຕ່າງໆ ຕາມທີ່ໄດ້ກຳນົດໄວ້ ໃນ ມາດຕາ 123, 124, 125,126, 127 ແລະ 128 ຂອງກົດໝາຍ ວ່າດ້ວຍປ່າໄມ້ ແລະ ກົດໝາຍອື່ນໆ ທີ່ວາງອອກ.

## ໝວດທີ VII

## ບົດບັນຍັດສຸດທ້າຍ

**ມາດຕາ 33. ການຈັດຕັ້ງປະຕິບັດ**

1. ບັນດາ ກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນ ເສດຖະກິດ ລວມທັງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງ ສະບັບນີ້ ໃຫ້ປາກົດຜົນເປັນຈິງ.

2 ກົມປ່າໄມ້, ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້. ກອງສົ່ງເສີມກະສິກຳ ແລະ ປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ສົມທົບກັບອົງການປົກຄອງທ້ອງຖິ່ນ, ໜ່ວຍງານກະສິກຳແລະປ່າໄມ້ປະຈຳບ້ານ ຕິດຕາມ, ຊຸກຍູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງ ສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 34. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ ແລະ ປ່ຽນແທນ ຂໍ້ຕົກລົງ ຂອງລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຟື້ນຟູປ່າໄມ້ທຳມະຊາດ ສະບັບເລກທີ 0173/ກປ.05 ລົງວັນທີ 22 ສິງຫາ 2005.

ລັດຖະມົນຕີວ່າການ ກະຊວງ ກະສິກຳ ແລະ ປ່າໄມ້

ກະຊວງກະສິກຳແລະປ່າໄມ້ ★ ລັດຖະມົນຕີ ★

ສິດທິເຮືອງ ຣາຊະພົນ